## ບົດປະເມີນຜົນໄດ້ຮັບ




ວິທີການຮຽນຮູ້ແບບມີສ່ວນຮ່ວມ ຜ່ານການທົດລອງເຮັດຕົວຈິງແມ່ນຮູບແບບໜຶ່ງຂອງການສົ່ງເສີມກະສິກຳສີຂຽວ. ນີ້ແມ່ນໜຶ່ງໃນການແລກປ່ຽນລະຫວ່າງຊາວກະສິກອນ ແລະ ຊາວກະສິກອນກ່ຽວກັບເຮັດການຄົ້ນຄ້ວາທົດລອງການຍົກສະມັດຕະພາບການຜະລິດເຂົ້ານາ ໃນປີ 2019, ທີ່ ແຂວງ ຊຽງຂວາງ.

# ການເພີ່ມກະບອກສຽງຂອງຊາວກະສິກອນໃຫ້ເຂັ້ມແຂງ

## 20 ປີ ທີ່ປະເທດສະວິດສ໌ໃຫ້ການຊ່ວຍເຫຼືອວຽກງານສົ່ງເສີມກະສິກຳຢູ່ໃນ ສປປ ລາວ

ປະເທດສະວິດສ໌ເຊີແລນ ໃຫ້ການສະໜັບສະໜູນ ສປປ ລາວ ມາເປັນໄລຍະເວລາຫຼາຍກວ່າ 22 ປີ ໃນຄວາມພະຍາຍາມເພື່ອຫຼຸດຜ່ອນຄວາມ ທຸກຍາກຢູ່ໃນເຂດຊົນນະບົດໂດຍຜ່ານວຽກງານການສົ່ງເສີມກະສິກຳ. ຕົວຊີ້ວັດທີ່ສຳຄັນໄດ້ສະແດງໃຫ້ເຫັນວ່າການພັດທະນາແມ່ນມີຄວາມຄືບໜ້າ, ວຽກງານກະສິກຳໄດ້ຫັນປ່ຽນເທື່ອລະກ້າວຈາກການຜະລິດແບບພໍແຕ່ກຸ້ມກິນ ຫັນໄປສູ່ການຜະລິດເພື່ອເປັນສິນຄ້າ ແລະ ວຽກງານບໍລິການສົ່ງເສີມກະສິກຳໃນເຂດຊົນນະບົດທີ່ມີແຕ່ພາກລັດ ກ້າວໄປສູ່ການສົ່ງເສີມທີ່ມີສ່ວນຮ່ວມຈາກຫຼາຍພາກສ່ວນ. ການສັງລວມບົດຮຽນກ່ຽວກັບວຽກງານສົ່ງເສີມກະສິກຳ ໃນ ສປປ ລາວ ທີ່ຈັດຕັ້ງປະຕິບັດໃນເດືອນ ພຶດສະພາ 2024 ຖືເປັນການທົບທວນຄືນກ່ຽວກັບການປະກອບສ່ວນຈາກ ອົງການ SDC ຕໍ່ການປ່ຽນແປງຕ່າງໆທີ່ເກີດຂຶ້ນໃນ ສປປ ລາວ. ຜົນສຳເລັດທີ່ພົ້ນເດັ່ນທີ່ສຸດແມ່ນການສະໜັບສະໜູນອົງການຈັດຕັ້ງຊາວກະສິກອນ ໃຫ້ກາຍເປັນສະມາຄົມຊາວກະສິກອນ ເພື່ອປົກປ້ອງສິດຜົນປະໂຫຍດຂອງຊາວກະສິກອນຂະໜາດນ້ອຍທົ່ວປະເທດ.

HELVETAS Swiss Intercooperation

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Embassy of Switzerland
Swiss Agency for Development and Cooperation SDC

Zurich, September 2024




© Peter Schmidt

ການພົບປະກັບກຸ່ມຜະລິດຊາ ຢູ່ສູນຮຽນຮູ້ ພາຍໃຕ້ກອບ "ການສັງລວມການສະໜັບສະໜູນຂອງປະເທດສະວິດສ໌ໃນວຽກງານສົ່ງເສີມການກະສິກຳໃນປະເທດລາວ". ສູນຮຽນຮູ້ແມ່ນອົງປະກອບສຳຄັນຂອງຮູບແບບການສົ່ງເສີມກະສິກຳສີຂຽວ.

## ເນື້ອໃນ:

### ການສະໜັບສະໜູນວຽກງານສົ່ງເສີມກະສິກຳຢູ່ ສປປລາວ ຈາກປະເທດສະວິດສ໌

**ຜູ້ໃຫ້ທຶນ:** ອົງການເພື່ອການພັດທະນາ ແລະ ການຮ່ວມມື (SDC)

**ຄູ່ຮ່ວມງານຝ່າຍລາວ:** ກະຊວງກະສິກຳ ແລະ ປ່າໄມ້, ກົມສົ່ງເສີມກະສິກຳ ແລະ ສະຫະກອນ (DAEC)

**ອົງການຈັດຕັ້ງປະຕິບັດ:** ອົງການເຮວວີຕັສສະວິສ໌ ເພື່ອການຮ່ວມມືສາກົນ

**ໂຄງການ:**

1. ໂຄງການສົ່ງເສີມກະສິກຳແບບລາວ (LEAP, 2001-2014), 11 ລ້ານສະວິດສ໌ຟຣັງ
2. ໂຄງການບໍລິການສົ່ງເສີມກະສິກຳຮອບດ້ານ (LURAS, 2015-2025), 15.8 ລ້ານສະວິສ໌ຟຣັງ

### ລະບົບການສົ່ງເສີມທີ່ມີສ່ວນຮ່ວມຈາກຫຼາຍພາກສ່ວນ

ກອງປະຊຸມລະດັບໂລກກ່ຽວກັບການບໍລິການສົ່ງເສີມຊຸມຊົນໃນເຂດຊົນນະບົດ (GFRAS) ໄດ້ນິຍາມ ຄຳວ່າ ການສົ່ງເສີມ ແມ່ນເປັນໜ້າທີ່ຂອງທຸກສະຖາບັນຈາກຂະແໜງການຕ່າງໆ ທີ່ຊ່ວຍເອື້ອອຳນວຍແກ່ຊາວກະສິກອນໃຫ້ເຂົ້າເຖິງແຫຼ່ງຄວາມຮູ້, ຂໍ້ມູນຂ່າວສານ ແລະ ເທັກໂນໂລຊີ; ການຕິດຕໍ່ພົວພັນກັບຕະຫຼາດ, ການຄົ້ນຄ້ວາວິໄຈ ແລະ ການສຶກສາ; ການພັດທະນາທັກສະ ແລະ ແນວທາງປະຕິບັດທາງດ້ານເຕັກນິກ, ການຈັດຕັ້ງ ແລະ ການຄຸ້ມຄອງບໍລິຫານ. ດັ່ງນັ້ນ ວຽກງານສົ່ງເສີມ ບໍ່ພຽງແຕ່ລວມວຽກງານສະໜອງຄວາມຮູ້ທາງດ້ານວິຊາການເທົ່ານັ້ນ ແຕ່ຍັງປະກອບດ້ວຍອົງປະກອບທີ່ສຳຄັນອື່ນໆ ເຊັ່ນ: ການສື່ສານ, ການເອື້ອອຳນວຍ ແລະ ການເສີມສ້າງຄວາມເຂັ້ມແຂງ (GFRAS 2018). ໃນເອກະສານສະບັບນີ້ ຄຳວ່າ "ການສົ່ງເສີມກະສິກຳ" ແລະ "ການບໍລິການສົ່ງເສີມກະສິກຳໃນເຂດຊົນນະບົດ" ແມ່ນມີຄວາມໝາຍທີ່ຄ້າຍຄືກັນ. ຄຳວ່າ "ຫຼາຍພາກສ່ວນ" ໝາຍເຖິງພາກສ່ວນຕ່າງໆທີ່ສະໜອງວຽກງານສົ່ງເສີມ ແລະ ແຫຼ່ງທຶນຈາກພາກສ່ວນຕ່າງໆ.

ເປັນໄລຍະເວລາຫຼາຍກວ່າ 20 ປີຜ່ານມາທີ່ວຽກງານກະສິກຳຢູ່ໃນ ສປປ ລາວ ໄດ້ມີການປ່ຽນແປງຢ່າງໄວວາ ໂດຍປ່ຽນຈາກການຜະລິດພໍແຕ່ກຸ້ມກິນໄປສູ່ການຜະລິດເປັນສິນຄ້າຫຼາຍຂຶ້ນ. ຕົວຂັບເຄື່ອນທີ່ສຳຄັນສຳລັບການປ່ຽນແປງແມ່ນການລົງທຶນໃສ່ການຜະລິດກະສິກຳໃນພື້ນທີ່ກວ້າງຂວາງ ແລະ ມີຄວາມຕ້ອງການສູງໃນເຂດພາກພື້ນເຊັ່ນ: ອຸດສາຫະກຳການຜະລິດອາຫານສັດ ສິ່ງນີ້ເຮັດໃຫ້ມີການບຸກເບີກພື້ນທີ່ເປັນຈຳນວນຫຼວງຫຼາຍ. ຕົວຊີ້ວັດການພັດທະນາທີ່ສຳຄັນແມ່ນການກ້າວໄປໃນທິດທາງທີ່ກຳນົດໄວ້ເຊັ່ນ: ຄວາມທຸກຍາກໄດ້ຫຼຸດລົງ ແລະ ດ້ານໂພສະນາການໄດ້ຮັບການປັບ ປຸງໃຫ້ດີຂຶ້ນ. ສຳລັບຊາວກະສິກອນທີ່ໃຫ້ການສຳພາດ ການປັບປຸງຖະໜົນຫົນທາງໃຫ້ດີຂຶ້ນ ແລະ ສັນຍານການເຊື່ອມຕໍ່ໂທລະສັບມືຖືທີ່ດີຂຶ້ນກວ່າເກົ່າ ຖືເປັນການປ່ຽນແປງທີ່ສຳຄັນທີ່ສຸດ. ວຽກງານສົ່ງເສີມກະສິກຳ – ລວມທັງພາກລັດ ແລະ ເອກະຊົນ – ໄດ້ປະກອບສ່ວນເພີ່ມທະວີຄວາມຮູ້ຂອງເຂົາເຈົ້າ ແລະ ເອື້ອອຳນວຍການເຊື່ອມໂຍງເຂົ້າຫາຕະຫຼາດ ຊຶ່ງເປັນການສະໜັບສະໜູນໃຫ້ຊາວກະສິກອນສວຍໃຊ້ໂອກາດໃໝ່ເຫຼົ່ານີ້ໃຫ້ເກີດຜົນປະໂຫຍດສູງສຸດ

### ລະບົບການສົ່ງເສີມທີ່ມີສ່ວນຮ່ວມຈາກຫຼາຍພາກສ່ວນ

ສປປ ລາວ ປະກອບມີ 18 ແຂວງ, 148 ເມືອງ ແລະ ມີຫຼາຍກວ່າ 8,300 ບ້ານ. ຄາດວ່າມີຄົວເຮືອນຈຳນວນ 200,000 ຄຄ ຢູ່ໃນເຂດຊົນນະບົດທີ່ຍັງຄົງດຳລົງຊີວິດຢູ່ໃນຄວາມທຸກຍາກ. ນັບຕັ້ງແຕ່ມີການສ້າງຕັ້ງກອງສົ່ງເສີມກະສິກຳ ແລະ ປ່າໄມ້ແຫ່ງຊາດຂຶ້ນໃນປີ 2001 ເປັນຕົ້ນມາ ແມ່ນມີພຽງໜ່ວຍງານດຽວທີ່ຂຶ້ນກັບ ກະຊວງກະສິກຳ ແລະ ປ່າໄມ້ ທີ່ມີໜ້າທີ່ຮັບຜິດຊອບວຽກງານສົ່ງເສີມກະສິກຳໂດຍລວມ. ວຽກງານບໍລິການສົ່ງເສີມກະສິກຳຕົວຈິງ ແມ່ນດຳເນີນການຜ່ານ

ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ທີ່ມີພະນັກງານລັດປະຈຳຢູ່ຈຳນວນປະມານ 6,000 ຄົນ ໃນທົ່ວປະເທດ. ການໃຫ້ຄຳແນະນຳທາງດ້ານວິຊາການ ແມ່ນໜຶ່ງໃນບັນດາໜ້າວຽກຂອງເຂົາເຈົ້າ.

ບົດສັງລວມກ່ຽວກັບວຽກງານສົ່ງເສີມກະສິກຳນີ້ ແມ່ນເພື່ອໃຫ້ມີຄວາມເຂົ້າໃຈພາບລວມຂອງວຽກງານສົ່ງເສີມກະສິກຳ (ເບິ່ງຂໍ້ມູນເພີ່ມຕື່ມໃນກ່ອງ). ໃນໄລຍະ 20 ປີທີ່ຜ່ານມາ, ການຊ່ວຍເຫຼືອຂອງປະເທດສະວິດສ໌ ແມ່ນສຸມໃສ່ລະບົບການສົ່ງເສີມຂອງພາກລັດ. ຕໍ່ມາ ຈຶ່ງໄດ້ມີການສົ່ງເສີມຈາກພາກສ່ວນເອກະຊົນ ເຊັ່ນ: ການບໍລິການຈາກບໍລິສັດຜູ້ສະໜອງປັດໄຈການຜະລິດກະສິກຳ ແລະ ບໍລິສັດທີ່ເປັນຕົວແທນການຈັດຊື້-ຂາຍຜະລິດຕະພັນກະສິກຳ ແມ່ນນັບມື້ໄດ້ຮັບຄວາມສຳຄັນຫຼາຍຂຶ້ນ. ໃນປັດຈຸບັນ, ການສະໜອງການບໍລິການຈາກພາກລັດ, ເອກະຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ກຸ່ມຊາວກະສິກອນ ທັງໝົດຖືເປັນລະບົບສົ່ງເສີມທີ່ມີສ່ວນຮ່ວມຈາກຫຼາຍພາກສ່ວນ. ການວິເຄາະສາມຄຸນລັກສະນະທີ່ສຳຄັນຂອງລະບົບການສົ່ງເສີມທີ່ມີສ່ວນຮ່ວມຈາກຫຼາຍພາກສ່ວນທີ່ມີປະສິດທິພາບ ແມ່ນປະກອບດ້ວຍ:

1. **ຄວາມສາມາດໃນການສະໜອງການບໍລິການ**: ຂີດຄວາມສາມາດຂອງບັນດາຜູ້ໃຫ້ການບໍລິການໃນການສະໜອງການບໍລິການໄດ້ຢ່າງມີປະສິດທິພາບ.
2. **ຄວາມຕ້ອງການທີ່ມີປະສິດທິຜົນ:** ສິດ ແລະ ສຽງຂອງຊາວກະສິກອນ ໃນການຮຽກຮ້ອງໃຫ້ສະໜອງການບໍລິການໃຫ້ໄດ້ຕາມຄວາມຕ້ອງການຕົວຈິງຂອງເຂົາເຈົ້າ.
3. **ການເອື້ອອຳນວຍດ້ານນະໂຍບາຍ:** ສຳລັບລະບົບການສົ່ງເສີມກະສິກຳຮອບດ້ານ ໃນເຂດຊົນນະບົດທີ່ມີປະສິດທິພາບນັ້ນຕ້ອງມີນະໂຍບາຍທີ່ເອື້ອອຳນວຍການດຳເນີນງານ.




ຮູບ 1: ອົງປະກອບຫຼັກຂອງລະບົບການບໍລິການສົ່ງເສີມທີ່ມີຫຼາຍພາກສ່ວນ (Kagi/Schmidt 2016)

## ຄວາມສາມາດໃນການສະໜອງການບໍລິການ

ໂຄງການ ສົ່ງເສີມກະສິກຳ (ໂຄງການ LEAP) ໄດ້ພັດທະນາຮູບແບບການສົ່ງເສີມແບບລາວ (LEA), ເຊິ່ງເປັນຊຸດຫຼັກການທີ່ມີເອກະສານກ່ຽວກັບການສົ່ງເສີມທີ່ຫຼາກຫຼາຍ. LEA ໄດ້ກາຍເປັນຮູບແບບການສົ່ງເສີມທີ່ເປັນທີ່ຮັບຮູ້ໃນທົ່ວປະເທດ ຊຶ່ງໄດ້ປະກອບສ່ວນຊ່ວຍໃຫ້ຊາວກະສິກອນມີລາຍຮັບເພີ່ມຂຶ້ນ ແລະ ຫັນປ່ຽນເປັນການຜະລິດກະສິກຳທີ່ຕິດພັນກັບຕະຫຼາດຫຼາຍຂຶ້ນກວ່າເກົ່າ. ມີການຮັບຮູ້ຢ່າງເປັນເອກະພາບກັນ ໂຄງການ LEAP ແລະ ໂຄງການ LURAS ໄດ້ປັບປຸງຂີດຄວາມສາມາດຂອງພະນັກງານສົ່ງເສີມໃຫ້ດີຂຶ້ນ.

ແຕ່ວຽກງານການສົ່ງເສີມຂອງພາກລັດແມ່ນຍັງປະເຊີນກັບຂໍ້ຈຳກັດຫຼາຍຢ່າງ. ນັບຕັ້ງແຕ່ຕອນເລີ່ມຕົ້ນຈົນມາເຖິງປັດຈຸ ບັນກໍຍັງບໍ່ທັນມີການປ່ຽນແປງ ວຽກສົ່ງເສີມເກືອບທັງໝົດຍັງມີການເອື່ອຍອີງໃສ່ທຶນຊ່ວຍເຫຼືອຈາກຜູ້ໃຫ້ທຶນ. ການຂາດແຄນງົບປະມານການດຳເນີນງານ ເຮັດໃຫ້ປະສິດທິພາບຂອງວຽກງານສົ່ງເສີມຫຼຸດລົງ ແລະ ບໍ່ສາມາດດຳເນີນງານໄດ້ ເວັ້ນແຕ່ຈະມີເງິນທຶນຊ່ວຍເຫຼືອຈາກຜູ້ໃຫ້ທຶນເທົ່ານັ້ນ. ດ້ວຍຄຳຂວັນທີ່ວ່າ "ການສົ່ງເສີມກະສິກຳແມ່ນວຽກຂອງປວງຊົນ" LEA ຖືເອົາການມີສ່ວນຮ່ວມຈາກທຸກເຜົ່າ, ທຸກເພດ ແລະ ທຸກໄວ ເປັນວິໄສທັດຮ່ວມກັນ. ແຕ່ເນື່ອງຈາກວ່າ ຂາດພະນັກງານວິຊາການເພດຍິງ ໂດຍສະເພາະພະນັກງານທີ່ສາມາດເວົ້າພາສາຊົນເຜົ່າໄດ້ ຈຶ່ງເຮັດໃຫ້ວຽກງານສົ່ງເສີມຂອງພາກລັດບໍ່ສາມາດເຂົ້າໄປເຖິງທຸກໆຄົນໄດ້.

ເນື່ອງຈາກການເຕີບໂຕຂອງພາກເອກະຊົນທີ່ມີຫຼາກຫຼາຍຂຶ້ນ ລະບົບການສົ່ງເສີມຂອງພາກລັດ ຈຶ່ງຄ່ອຍໆເລີ່ມມີການສະໜອງວຽກງານສົ່ງເສີມໂດຍພາກເອກະຊົນ. ໂຄງການ LEAP ແລະ ໂຄງການ LURAS ມີສ່ວນຊ່ວຍໃນການປ່ຽນແປງດັ່ງກ່າວ ແລະ ເປັນການລິເລີ່ມໃຫ້ກ້າວໄປສູ່ການສົ່ງເສີມກະສິກຳໂດຍເອກະຊົນເປັນເຈົ້າການ ເຊິ່ງໃນປັດຈຸບັນແມ່ນມີຢູ່ຢ່າງແຜ່ຫຼາຍ.

ເນື່ອງຈາກການນຳໃຊ້ຊັບພະຍາກອນທຳມະຊາດແບບບໍ່ຍືນຍົງ ແລະ ມີການໂຕ້ວາທີກັນໃນທົ່ວໂລກກ່ຽວກັບການປ່ຽນ ແປງສະພາບດິນຟ້າອາກາດ ຈຶ່ງເປັນເຫດເຮັດໃຫ້ວຽກງານສົ່ງເສີມກະສິກຳຢູ່ໃນ ສປປ ລາວ ຈຳເປັນຕ້ອງໄດ້ປ່ຽນແປງບູລິມະສິດຕາມສະພາບການ. ໂຄງການ LURAS ມີສ່ວນປະກອບສຳຄັນໃນການພັດທະນາຮູບແບບ "ການສົ່ງເສີມກະສິກຳສີຂຽວ" ຊຶ່ງສຸມໃສ່ການເຮັດກະສິກຳແບບຍືນຍົງ ລວມທັງການດັດປັບໃຫ້ເຂົ້າກັບສະພາບການປ່ຽນແປງຂອງດິນຟ້າອາກາດ ແລະ ການຮັກສາຊີວະນາໆພັນ.



© Helvetas

ການສ້າງຄວາມເຂັ້ມແຂງໃຫ້ໄວໜຸ່ມ ແລະ ແມ່ຍິງ ຄຽງຄູ່ກັບການເສີມສ້າງທັກສະດ້ານເຕັກນິກ ແລະ ທຸລະກິດ ເພື່ອໃຫ້ໄວໜຸ່ມສາມາດລິເລີ່ມທຸລະກິດຂອງຕົນເອງ ແມ່ນອີກຮູບແບບໜຶ່ງຂອງການສົ່ງເສີມກະສິກຳສີຂຽວ. ໃນນີ້ ໄວໜຸ່ມກຳລັງຮຽນຮູ້ເຕັກນິກການລ້ຽງປາລະຫວ່າງການຝຶກງານໃນ ປີ 2024 ຢູ່ແຂວງຫຼວງພະບາງ.

## ການສະໜອງຕາມຄວາມຕ້ອງການ

ການສະໜັບສະໜູນຂອງປະເທດສະວິດສ໌ເຊີແລນໃນການສົ່ງເສີມກະສິກຳໄດ້ເອື້ອອຳນວຍການຈັດຕັ້ງກຸ່ມຊາວກະສິກອນຂຶ້ນ. ດ້ວຍເຫດນີ້ ວາລະຂອງລັດຖະບານ ກ່ຽວກັບການເພີ່ມການຜະລິດໂດຍຜ່ານກຸ່ມຊາວກະສິກອນຕ່າງໆ ຈຶ່ງສອດຄ່ອງກັບວາລະຂອງຜູ້ໃຫ້ທຶນໃນການຍົກລະດັບກະບອກສຽງຂອງຊາວກະສິກອນໃຫ້ມີຄວາມເຂັ້ມແຂງຫຼາຍຂຶ້ນ. ໃນປີ

2024 ໄດ້ມີການຈົດທະບຽນປະມານ 5’000 ກຸ່ມ ເປັນກຸ່ມຜະລິດ ແລະ ສະຫະກອນ. ສຳລັບ “ກຸ່ມການຮຽນຮູ້” – ອົງປະກອບຫຼັກອັນໜຶ່ງຂອງ LEA – ຖືເອົາການແລກປ່ຽນຄວາມຮູ້ ແລະ ການສ້າງເຄືອຂ່າຍເປັນອົງປະກອບທີ່ສຳຄັນຂອງກຸ່ມ. ປັດຈຸບັນ ສື່ອີເລັກໂທນິກຊ່ວຍອຳນວຍຄວາມສະດວກກ່ຽວກັບເລື່ອງນີ້.

ເຄືອຂ່າຍຊາວກະສິກອນລາວ (LFN) ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 2014 ແລະ ໄດ້ຈົດທະບຽນເປັນສະມາຄົມຊາວກະສິກອນລາວ (LFA) ໃນປີ 2023, ເປັນຕົວແທນໃຫ້ແກ່ຊາວກະສິກອນຈຳນວນ 190 ກຸ່ມ (ໃນປີ 2024). ການມີຕົວຕົນ ແລະ ປະສິດທິພາບໃນການດຳເນີນງານຂອງ LFA ສາມາດອ້າງອີງເປັນຜົນງານຈາກການປະກອບສ່ວນຂອງໂຄງການ LEAP/LURAS. ປັດຈຸບັນ LFA ແມ່ນອົງກອນຫຼັກ ທີ່ມີປະສິດທິພາບເປັນຕົວແທນໃນການເປັນກະບອກສຽງໃຫ້ຊາວກະສິກອນໃນການສົນທະນາທາງດ້ານນະໂຍບາຍ.

ອົງການຈັດຕັ້ງທາງສັງຄົມ ຍັງຄົງມີບົດບາດໜ້ອຍ ແຕ່ນັບມື້ເລີ່ມມີບົດບາດຫຼາຍຂຶ້ນໃນການສະໜອງວຽກງານສົ່ງເສີມໃນເຂດຊົນນະບົດ. ແຕ່ເຖິງຢ່າງໃດກໍຕາມ, ກໍໄດ້ມີການລາຍງານວ່າ ອົງການຈັດຕັ້ງທາງສັງຄົມ ເລີ່ມມີພື້ນທີ່ຫຼາຍຂຶ້ນໃນເວທີການສົນທະນາທາງດ້ານນະໂຍບາຍ.

## ນະໂຍບາຍທີ່ເອື້ອອຳນວຍ

ເພື່ອເປັນການຕອບສະໜອງຕໍ່ຄວາມພະຍາຍາມຂອງບັນດາຄູ່ຮ່ວມງານເພື່ອບັນລຸເປົ້າໝາຍການພັດທະນາສະຫັດສະວັດ, ຈຶ່ງໄດ້ມີການສ້າງຕັ້ງໜ່ວຍງານຕາມຂະແໜງການຕ່າງໆຂຶ້ນ. ນັບຕັ້ງແຕ່ປີ 2006 ເປັນຕົ້ນມາ, ຄູ່ຮ່ວມງານຝ່າຍລາວ ແລະ SDC ໄດ້ເປັນປະທານຮ່ວມກອງປະຊຸມໜ່ວຍງານຍ່ອຍດ້ານຊາວກະສິກອນ ແລະ ທຸລະກິດກະສິກຳ (SSWG-FAB) ແລະ ໄດ້ມອບໝາຍໃຫ້ໂຄງການ LEAP/LURAS ເຮັດໜ້າທີ່ເປັນກອງເລຂາ. ເພື່ອສະດວກໃນການເຂົ້າເຖິງເອກະສານ (ນະໂຍບາຍ) ດ້ານກະສິກຳ ໂຄງການຈຶ່ງໄດ້ສ້າງຕັ້ງ Lao-FAB (ເວທີສົນທະນາເປັນພາສາອັງກິດ) ແລະ Lao-44 (ເວທີສົນທະນາເປັນພາສາລາວ) ຂຶ້ນ ແລະ ຕໍ່ມາໄດ້ໃຫ້ການສະໜັບສະໜຸນໃຫ້ກາຍເປັນສູນລວມຂໍ້ມູນ ແລະ ເວທີສົນທະນາທາງອອນລາຍ. SSWG-FAB ຖືວ່າເປັນໜຶ່ງໃນບັນດາໜ່ວຍງານ ທີ່ມີຄວາມຫ້າວຫັນ ແລະ ປະສົບຜົນສຳເລັດຫຼາຍທີ່ສຸດ. ພາຍໃຕ້ກອບດັ່ງກ່າວ ກໍ່ໄດ້ມີການດຳເນີນການຄົ້ນຄ້ວາວິໄຈເປັນຈຳນວນຫຼາຍເພື່ອກຳນົດໃຫ້ເປັນວາລະການປະຊຸມປຶກສາຫາລືດ້ານນະໂຍບາຍໃນລະດັບຊາດ. ການສະໜັບສະໜຸນຈາກປະເທດສະວິດສ໌ເຊີແລນ ຍັງຊ່ວຍປະກອບສ່ວນສ້າງກົດໝາຍ ແລະ ນະໂຍບາຍຕ່າງໆທີ່ຕິດພັນກັບວຽກງານສົ່ງເສີມກະສິກຳ. ຫວ່າງມໍ່ໆມານີ້, ກົມສົ່ງເສີມກະສິກຳ ແລະ ສະຫະກອນ ໄດ້ສ້າງຮ່າງກົດໝາຍວ່າດ້ວຍສະຫະກອນ ແລະ ດຳລັດວ່າດ້ວຍກະສິກຳແບບມີສັນຍາ ໂດຍໄດ້ຮັບການສະໜັບສະໜຸນຈາກໂຄງການ LURAS.

ເຖິງວ່າຈະມີນະໂຍບາຍທີ່ດີຫຼາຍອັນທີ່ໄດ້ສ້າງຂຶ້ນແລ້ວກໍຕາມ ແຕ່ກໍໄດ້ມີການລາຍງານເຖິງຄວາມແຕກໂຕນທີ່ຊັດເຈນລະຫວ່າງນະໂຍບາຍ ແລະ ພາກການຈັດຕັ້ງປະຕິບັດຕົວຈິງ. ສິ່ງທີ່ພົ້ນເດັ່ນຫຼາຍທີ່ສຸດແມ່ນຊ່ອງຫວ່າງໃນການຈັດຕັ້ງປະຕິບັດນະໂຍບາຍກ່ຽວກັບການນຳໃຊ້ທີ່ດິນ, ສິດທິແຮງງານ ແລະ ການນຳໃຊ້ຢາປາບສັດຕູພືດ.

## ທ່າອ່ຽງ

ວຽກງານກະສິກຳຢູ່ໃນ ສປປ ລາວ ໄດ້ປ່ຽນແປງຢ່າງວອງໄວຕະຫຼອດໄລຍະສອງທົດສະວັດທີ່ຜ່ານມາ ແລະ ເຊັ່ນດຽວກັນກັບວຽກງານສົ່ງເສີມກະສິກຳ. ໃນປັດຈຸບັນ, ລະບົບການສົ່ງເສີມກະສິກຳຂອງ ສປປ ລາວ ແມ່ນໄດ້ຖືກກະຈາຍລົງສູ່ທ້ອງຖິ່ນ ແລະ ມີຄວາມຫຼາກຫຼາຍຂຶ້ນ, ໝາຍຄວາມວ່າເລີ່ມມີການສົ່ງເສີມຈາກພາກເອກະຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ລະຫວ່າງຊາວກະສິກອນດ້ວຍກັນ ນັບມື້ເພີ່ມຂຶ້ນເລື້ອຍໆ. ສ່ວນການສົ່ງເສີມຈາກພາກລັດແມ່ນຍັງຄົງມີທ່າອ່ຽງສືບຕໍ່ເອື່ອຍອີງໃສ່ຜູ້ໃຫ້ທຶນອີກຫຼາຍປີຕໍ່ໜ້າ. ຕາມຫຼັກການແລ້ວ, ວຽກງານສົ່ງເສີມຂອງພາກລັດຄວນສຸມໃສ່ສິ່ງທີ່ເປັນປະໂຫຍດຕໍ່ສາທາລະນະຊົນ ສ່ວນວຽກງານສົ່ງເສີມຂອງພາກເອກະຊົນ ແມ່ນສົ່ງເສີມສິ່ງທີ່ເປັນປະໂຫຍດສຳລັບເຂົາເຈົ້າເອງ. ສຳລັບຜົນປະໂຫຍດຕໍ່ສາທາລະນະຊົນ ຍັງຄົງແມ່ນການຫຼຸດຜ່ອນຄວາມທຸກຍາກ ແລະ ການປັບປຸງທາງດ້ານໂພສະນາການໃຫ້ດີຂຶ້ນຕໍ່ໄປ. ນອກຈາກນີ້, ຜົນປະໂຫຍດຕໍ່ສາທາລະນະຊົນຍັງລວມທັງການປັບຕົວໃຫ້ເຂົ້າກັບການປ່ຽນແປງຂອງດິນຟ້າອາກາດ, ການຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ, ການຟື້ນຟູ ແລະ ການຮັກສາຊີວະນາໆພັນ ອີກດ້ວຍ.



© Helvetas

“ການສົ່ງເສີມກະສິກຳສີຂຽວ” ແມ່ນການສຸມໃສ່ຕ່ອງໂສ້ຜະລິດຕະພັນທີ່ມີມູນຄ່າສູງ ທີ່ປະກອບສ່ວນຕໍ່ຜົນໄດ້ຮັບທາງດ້ານເສດຖະກິດ, ສັງຄົມ ແລະ ລະບົບນິເວດວິທະຍາ.

HELVETAS Swiss Intercooperation

Weinbergstr. 22a, PO Box 3130, CH-8021 Zurich
Maulbeerstr. 10, PO Box 6724, CH-3001 Bern
info@helvetas.org, www.helvetas.org